# ບົດຮຽນທີ 12: ການແບ່ງປັນເລື່ອງລາວຂອງພຣະເຈົ້າ

*ຂໍ້ຄວນຈໍາ*

*ອົງພຣະຜູ້ເປັນເຈົ້າ ພຣະເຈົ້າ ພຣະອົງໄດ້ສັ່ງສອນສິ່ງທີ່ຂ້ອຍຈະເວົ້າ ເພື່ອວ່າ ຂ້ອຍຈະໄດ້ຊ່ວຍຜູ້ທີ່ອ່ອນແຮງໃຫ້ພວກເຂົາເຂັ້ມແຂງ ແລະ ມີແຮງຂຶ້ນໃໝ່. ທຸກໆເຊົ້າ ພຣະອົງໄດ້ໃຫ້ຂ້ອຍຫືວກະຫາຍ ຟັງສິ່ງທີ່ພຣະອົງກໍາລັງສັ່ງສອນຂ້ອຍ." (ອຊຢ 50:4)*

1. **ຄົນທີ່ເຄີຍຖືກຜີສິງ**ໃນພຣະທໍາ ມາລະໂກ ບົດທີ 5 **ບໍ່ໄດ້ມີຄວາມຮູ້ພຣະຄໍາພີຫຼາຍ**, ແຕ່ຍ້ອນຫຍັງ ລາວຈຶ່ງສາມາດເຮັດໃຫ້ຄົນທັງເມືອງອັດສະຈັນໃຈໃນເລື່ອງຂອງພຣະເຢຊູໄດ້? ເລື່ອງນີ້ຊ່ວຍໃຫ້ທ່ານເຫັນແນວໃດວ່າ ປະສົບການສ່ວນຕົວ ຂອງທ່ານກັບພຣະເຈົ້າ ກໍມີພະລັງຫຼາຍພໍທີ່ຈະນໍາໄປປະກາດໄດ້ ໂດຍບໍ່ຕ້ອງຖ້າໃຫ້ເຮົາເກັ່ງກ່ອນ?
2. ຈາກກິດຈະການ 1:8, **ຫຼາຍຄົນມັກຄິດວ່າ ຂ້ອຍເວົ້າບໍ່ເກັ່ງ ບໍ່ກ້າເລົ່າເລື່ອງພຣະເຈົ້າ**. ທ່ານຄິດວ່າ ຍ້ອນຫຍັງທ່ານຈຶ່ງ**ຕ້ອງເພິ່ງພາ ຣິດເດດຂອງພຣະວິນຍານບໍລິສຸດ ຫຼາຍກວ່າຄວາມສາມາດຂອງຕົນເອງ**? ໃນເມື່ອພຣະວິນຍານເປັນຜູ້ເຮັດວຽກ, **ໜ້າທີ່**ໃນການ ຕຽມຕົວ**ຂອງທ່ານໃນແຕ່ລະວັນຄືການເຮັດຫຍັງແດ່**?
3. ບາງຄົນຫຼົງທາງໄປຍ້ອນບໍ່ຮູ້ຕົວ (ຄືແກະ), ບາງຄົນຫຼົງໄປຍ້ອນຄວາມຕັ້ງໃຈ (ຄືລູກລ້າງຜານ). ໃນມຸມມອງຂອງທ່ານ, ຍ້ອນຫຍັງ **ພຣະເຈົ້າຈຶ່ງຍັງຄົງຮັກ ແລະ ຢາກໄດ້ພວກເຂົາຄືນມາທຸກຄົນໂດຍບໍ່ເລືອກປະເພດ**? ເມື່ອພວກເຂົາຕັດສິນໃຈກັບມາ, ເຮົາຈະເຮັດແນວໃດໃຫ້ພວກເຂົາຮູ້ສຶກເຖິງ **ຄວາມອົບອຸ່ນ, ປອດໄພ ແລະ ການອະໄພ** ແທນທີ່ຈະຮູ້**ສຶກເຖິງການຖືກຕັດສິນ**?